ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສາຂາທະນາຄານແຫ່ງ ສປປ ລາວ
ພາກເໜືອແຂວງ ອຸດົມໄຊ

ເລກທີ: 730 /ທຫລ.ອຊ
ລົງວັນທີ: ...06 AUG 2020...

# ແຈ້ງການ

**ເຖິງ:** ບຸກຄົນ ແລະ ນິຕິບຸກຄົນທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດແລກປ່ຽນເງິນຕາພາຍໃນ ແຂວງ ອຸດົມໄຊ, ຫຼວງນ້ຳທາ, ບໍ່ແກ້ວ ແລະ ຜົ້ງສາລີ.

**ເລື່ອງ:** ເປີດຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ.

- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ ສະບັບເລກທີ 344/ທຫລ, ລົງວັນທີ 13/05/2008.
- ອີງຕາມຂໍ້ຕົກລົງວ່າດ້ວຍທຸລະກິດແລກປ່ຽນເງິນຕາສະບັບເລກທີ 393/ທຫລ, ລົງວັນທີ 2 ກໍລະກົດ 2020.

ສາຂາ ທະນາຄານ ແຫ່ງ ສປປ ລາວພາກເໜືອ ແຂວງ ອຸດົມໄຊ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດແລກປ່ຽນເງິນຕາ ພາຍໃນ ແຂວງ ອຸດົມໄຊ, ຫຼວງນ້ຳທາ, ບໍ່ແກ້ວ ແລະ ຜົ້ງສາລີ ຊາບວ່າ: ສາຂາທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ ໄດ້ເລີ່ມຮັບຄຳຮ້ອງຂໍອານຸຍາດດຳເນີນທຸລະກິດແລກປ່ຽນເງິນຕານັບແຕ່ເດືອນ ສິງຫາ 2020 ເປັນຕົ້ນໄປ. ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຄວາມສົນໃຈຢາກດຳເນີນທຸລະກິດແລກປ່ຽນເງິນຕາ ແມ່ນສາມາດເຂົ້າມາພົວພັນນຳພະແນກ ເສດຖະກິດ ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ສາຂາທະນາຄານ ແຫ່ງ ສປປ ລາວ ພາກເໜືອແຂວງ ອຸດົມໄຊ ຕາມວັນ, ເວລາໂມງ ລັດຖະການ.

**ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ.**

ຊ. ຫົວໜ້າ ສາຂາທະນາຄານແຫ່ງ ສປປ ລາວ
ພາກເໜືອ ແຂວງອຸດົມໄຊ.

ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ

ດອຈັນ ແກ້ວມະນີ

ສອບຖາມ ຕິດຕໍ່ ເບີໂທ
- ໂທ: 081 260013
- ແຟັກ: 081 211652